ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------000-----------

ສະພາແຫ່ງຊາດຊຸດທີ VI

ກອງປະຊຸມສະໄໝສາມັນເທື່ອທີ 9

ເລກທີ 65 / ສພຊ-VI

ນະຄອນຫຼວງວຽງຈັນ, ວັນທີ 30 ມິຖຸນາ 2010

# ມະຕິ ກອງປະຊຸມ
# ສະພາແຫ່ງຊາດ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທີ່ດິນ

---

- ອີງຕາມ ກົດໝາຍວ່າດ້ວຍ ທີ່ດິນ ສະບັບເລກທີ 04/ສພຊ ລົງວັນທີ 21 ຕຸລາ 2003 ;
- ອີງຕາມ ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ;
- ອີງໃສ່ສະພາບການຄຸ້ມຄອງ ແລະ ນຳໃຊ້ທີ່ດິນລວມທັງຜົນຂອງການຕິດຕາມກວດກາໃນທົ່ວປະເທດໃນຊຸມປີຜ່ານມາແລະໃນປະຈຸບັນເຫັນວ່າ ພວມເປັນບັນຫາທີ່ພົ້ນເດັ່ນໃນທົ່ວສັງຄົມ ;
- ເພື່ອເປັນການຜັນຂະຫຍາຍໝາກຜົນຂອງກອງປະຊຸມປຶກສາຫາລື ລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານແລະອົງການປົກປ້ອງກົດໝາຍກ່ຽວກັບການກຳນົດມາດຕະການແກ້ໄຂບັນຫາການຄຸ້ມຄອງ ແລະນຳໃຊ້ທີ່ດິນ ໃນວັນທີ 8 - 9 ມິຖຸນາ 2010 ;
- ບົນພື້ນຖານການປະກອບຄວາມເຫັນ ຂອງສະມາຊິກສະພາແຫ່ງຊາດ ທີ່ເປັນທິດໃນການກຳນົດມາດຕະການ ເພື່ອແກ້ໄຂຂໍ້ຂັດແຍ່ງ ແລະບັນຫາທີ່ຍັງຄົງຄ້າງ ກ່ຽວກັບການຄຸ້ມຄອງ ແລະນຳໃຊ້ທີ່ດິນໃນສະເພາະໜ້າ ແລະ ຍາວນານ.

ໂດຍເຫັນໄດ້ຄວາມສຳຄັນຂອງທີ່ດິນ ທີ່ຕິດພັນກັບຜົນປະໂຫຍດຕົວຈິງຂອງປະຊາຊົນ ແລະເປັນ ພາຫະນະການຜະລິດທີ່ສຳຄັນຂອງປະຊາຊົນລາວໂດຍສະເພາະແມ່ນວຽກງານການຜະລິດ-ທຸລະກິດເພື່ອແກ້ໄຂຄວາມທຸກຍາກຂອງປະຊາຊົນຈຶ່ງມີຄວາມຈຳເປັນຕ້ອງມີການຄຸ້ມຄອງລວມສູນເພື່ອສ້າງປະໂຫຍດສູງສຸດໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 9 ຂອງສະພາແຫ່ງຊາດ ຊຸດທີ VI ຕົກລົງດັ່ງນີ້ :

**ມາດຕາ1.** ໃຫ້ຄະນະປະຈຳສະພາແຫ່ງຊາດ ປະສານສົມທົບກັບລັດຖະບານ ກວດກາຄືນບັນດາມາດຕາຂອງກົດໝາຍວ່າດ້ວຍທີ່ດິນ, ກົດໝາຍ ແລະນິຕິກຳອື່ນທີ່ກ່ຽວຂ້ອງ ຊຶ່ງບໍ່ສອດຄ່ອງກັບການຄຸ້ມຄອງ, ນຳໃຊ້ທີ່ດິນ ແລະສະພາບການຂະຫຍາຍຕົວທາງດ້ານເສດຖະກິດ - ສັງຄົມ ໃນໄລຍະໃໝ່. ພ້ອມກັນນັ້ນ ກໍ່ປະສານໄປຍັງລັດຖະບານ ເພື່ອຊີ້ນຳຂະແໜງການທີ່ກ່ຽວຂ້ອງກວດກາຄືນຄວາມບໍ່ສອດຄ່ອງຂອງກົດໝາຍທີ່ປະກາດໃຊ້ແລ້ວ ແລະຂຶ້ນແຜນສ້າງ ແລະປັບປຸງກົດໝາຍທີ່ຈຳເປັນນຳສະເໜີຕໍ່ກອງປະຊຸມສະໄໝສາມັນຄັ້ງຕໍ່ໄປເພື່ອເຮັດໃຫ້ການຄຸ້ມຄອງແລະນຳໃຊ້ທີ່ດິນຫັນປ່ຽນໄປສູ່ຄຸນນະພາບໃໝ່ ແລະເພື່ອໃຫ້ເກີດປະໂຫຍດສູງສຸດ ແກ່ລັດ, ປະຊາຊົນ ແລະ ຜູ້ລົງທຶນ.

**ມາດຕາ 2.** ໃຫ້ລັດຖະບານສືບຕໍ່ຊີ້ນຳບັນດາກະຊວງ, ອົງການ, ແຂວງ, ນະຄອນຫຼວງດຳເນີນການແກ້ໄຂບັນຫາຕ່າງໆທີ່ພົວພັນກັບການຄຸ້ມຄອງ ແລະນຳໃຊ້ທີ່ດິນ ຊຶ່ງສະມາຊິກສະພາແຫ່ງຊາດໄດ້ຍົກຂຶ້ນໃນກອງປະຊຸມຄັ້ງນີ້ຕາມພາລະບົດບາດຮັບຜິດຊອບຂອງຕົນ ໂດຍໃຫ້ເອົາໃຈໃສ່ບັນຫາຈຳນວນໜຶ່ງ ດັ່ງນີ້ :

1. ຊີ້ນຳອົງການຄຸ້ມຄອງທີ່ດິນແຫ່ງຊາດ ຮີບຮ້ອນສ້າງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດໃຫ້ສຳເລັດ ແລະນຳສະເໜີຕໍ່ຄະນະປະຈຳສະພາແຫ່ງຊາດ ພິຈາລະນາຮັບຮອງເອົາ ເພື່ອໃຫ້ລັດຖະບານສາມາດປະກາດໃຊ້ໃຫ້ທັນກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011 - 2015).

2. ຊີ້ນຳການຫັນປ່ຽນປະເພດທີ່ດິນ, ການອະນຸມັດໃຫ້ເຊົ່າ ແລະສຳປະທານທີ່ດິນປ່າໄມ້ໃຫ້ໄປຕາມຂອບເຂດສິດທີ່ກຳນົດໄວ້ໃນມາດຕາ 72, 73, 74, 75 ແລະ 76 ຂອງກົດໝາຍວ່າດ້ວຍປ່າໄມ້ພ້ອມດຽວກັນນັ້ນກໍ່ໃຫ້ຈັດຕັ້ງປະຕິບັດຕາມມາດຕາ7,14, 59, 64 ແລະ 65 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງປີ2003 ແລະນິຕິກຳອື່ນໆທີ່ກ່ຽວຂ້ອງກັບການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວຢ່າງເຂັ້ມງວດ.ການໃຫ້ເຊົ່າ ແລະສຳປະທານທີ່ດິນລັດ ຕ້ອງປະຕິບັດຕາມດຳລັດ ເລກທີ 135/ນຍ ລົງວັນທີ 25/5/2009 ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານຢ່າງເຂັ້ມງວດ. ບໍ່ໃຫ້ອົງການປົກຄອງບ້ານອະນຸມັດໃຫ້ເຊົ່າ ຫຼື ສຳປະທານທີ່ດິນລັດ ແລະທີ່ດິນລວມຂອງບ້ານໃຫ້ແກ່ບຸກຄົນ ແລະນິຕິບຸກຄົນຢ່າງເດັດຂາດ. ສ່ວນການນຳໃຊ້ປ່າໄມ້, ຜະລິດຕະພົນປ່າໄມ້ເພື່ອສາທາລະນະປະໂຫຍດຂອງບ້ານ, ການນຳໃຊ້ປ່າໄມ້ຕາມປະເພນີ ແມ່ນໄດ້ປະຕິບັດຕາມມາດຕາ 40, 41 ແລະ 42 ຂອງກົດໝາຍວ່າດ້ວຍປ່າໄມ້.

3. ຊີ້ນຳການຈັດຕັ້ງປະຕິບັດການອອກໃບຕາດິນ, ການມອບດິນມອບປ່າ ໃຫ້ຄອບຄົວປະຊາຊົນຢູ່ແຕ່ລະບ້ານຢ່າງເປັນລະບົບ ໂດຍຈັດສັນເນື້ອທີ່ການຜະລິດແບບຄົງທີ່ ແລະທີ່ຢູ່ອາໃສໃຫ້ສອດຄອງກັບມາດຕະການປົກປັກຮັກສາສະພາບແວດລ້ອມທີ່ຍືນນານ. ພ້ອມດຽວກັນນັ້ນກໍ່

ຕ້ອງກວດຄືນການອອກໃບຕາດິນຊໍ້າຊ້ອນໃນໄລຍະຜ່ານມາ ແລະມີມາດຕະການແກ້ໄຂເພື່ອຮັບປະກັນຄວາມຖືກຕ້ອງຕາມລະບຽບການ.

4. ຊີ້ນຳອົງການຄຸ້ມຄອງທີ່ດິນແຫ່ງຊາດ ສົມທົບກັບອົງການປົກຄອງແຂວງ, ນະຄອນ ແລະ ພາກສ່ວນທີ່ກ່ຽວຂ້ອງກວດກາຄືນການຊົດເຊີຍສິດນຳໃຊ້ທີ່ດິນໃນບ່ອນທີ່ຍັງມີບັນຫາ. ການຊົດເຊີຍສິດນຳໃຊ້ທີ່ດິນທີ່ຖືກຜົນກະທົບຈາກໂຄງການພັດທະນາຂອງລັດ, ໂຄງການສຳປະທານຂອງພາກເອກະຊົນ ຕ້ອງດຳເນີນການໃຫ້ຖືກຕ້ອງຕາມມາດຕາ 43 ຂອງດຳລັດເລກທີ135/ນຍ ເພື່ອມີຄວາມເປັນທຳແກ່ປະຊາຊົນຜູ້ທີ່ຖືກຜົນກະທົບຈາກໂຄງການ ແນ່ໃສ່ຮັບປະກັນ 3 ຜົນປະໂຫຍດ (ລັດ, ຜູ້ລົງທຶນ,ແລະບຸກຄົນ-ພົນລະເມືອງ) ໃຫ້ມີຄວາມກົມກຽວກັນ,ສາມາດດຶງດູດການລົງທຶນ ແລະໃຫ້ມີຄວາມສະຫງົບໃນທົ່ວສັງຄົມ.

5. ຮີບຮ້ອນຄົ້ນຄ້ວາສ້າງນິຕິກຳທີ່ຈຳເປັນ ພ້ອມທັງວາງນະໂຍບາຍ ແລະ ກົນໄກການຄຸ້ມຄອງທີ່ດິນໃຫ້ຊັດເຈນ ແລະຮັດກຸມ, ມີມາດຕະການສະກັດກັ້ນການຈັບຈອງທີ່ດິນ, ການມອບ-ໂອນສິດນຳໃຊ້ທີ່ດິນ ທີ່ບໍ່ຖືກຕ້ອງຕາມກົດໝາຍ.

6. ເພີ່ມທະວີການເຜີຍແຜ່ກົດໝາຍ ແລະນິຕິກຳອື່ນ ທີ່ພົວພັນເຖິງການຄຸ້ມຄອງ ແລະນຳໃຊ້ທີ່ດິນໃຫ້ກ້ວາງຂວາງ ແລະທົ່ວເຖິງ ເພື່ອຍົກສູງສະຕິເຄົາລົບ ແລະປະຕິບັດກົດໝາຍແກ່ພະນັກງານ ແລະປະຊາຊົນ. ເພີ່ມທະວີການຊີ້ນຳ ແລະຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະນິຕິກຳທີ່ພົວພັນກັບບັນຫາທີ່ດິນ ຢູ່ໃນບັນດາຂະແໜງການ ແລະອົງການປົກຄອງທ້ອງຖິ່ນທຸກຂັ້ນ.

<u>ມາດຕາ 3.</u> ໃຫ້ສານປະຊາຊົນສູງສຸດ ແລະອົງການໄອຍະການປະຊາຊົນສູງສຸດ ຢຸດເຊົາການພິຈາລະນາຄະດີກ່ຽວກັບທີ່ດິນຂອງຜູ້ປະໜີໄປຕ່າງປະເທດຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 76 ຂອງກົດໝາຍວ່າດ້ວຍທີ່ດິນສະບັບປັບປຸງປີ 2003. ສຳລັບທີ່ດິນ ທີ່ມີຕັດສິນຂອງສານໃຊ້ໄດ້ຢ່າງເດັດຂາດເປັນຂອງລັດແລ້ວນັ້ນ ມອບໃຫ້ກະຊວງຍຸຕິທຳສົມທົບກັບອົງການຄຸ້ມຄອງທີ່ດິນແຫ່ງຊາດ, ອົງການໄອຍະການປະຊາຊົນສູງສຸດ ແລະກະຊວງການເງິນຕິດຕາມກວດກາ ເພື່ອລວບລວມທີ່ດິນດັ່ງກ່າວເຂົ້າໃນການຄຸ້ມຄອງລວມສູນຂອງລັດຕາມລະບຽບກົດໝາຍ ລວມທັງທີ່ດິນຊຶ່ງບຸກຄົນ ຫຼື ການຈັດຕັ້ງທີ່ໄດ້ສະໝັກໃຈມອບໃຫ້ລັດ.

ສຳລັບຄະດີທີ່ພວມດຳເນີນການຄົ້ນຄ້ວາປັດຈຸບັນນີ້ ກໍ່ໃຫ້ພາກສ່ວນກ່ຽວຂ້ອງສືບຕໍ່ແກ້ໄຂໄປຕາມລະບຽບກົດໝາຍ. ພາຍຫຼັງມະຕິຂອງກອງປະຊຸມສະພາແຫ່ງຊາດໄດ້ອອກແລ້ວຈຶ່ງໄດ້ຢຸດເຊົາການພິຈາລະນາ.

<u>ມາດຕາ 4.</u> ກອງປະຊຸມສະໄໝສາມັນເທື່ອທີ່ 9 ຂອງສະພາແຫ່ງຊາດຊຸດທີ VI ມອບໃຫ້ຄະນະປະຈຳ, ບັນດາກຳມາທິການຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳແຕ່ລະເຂດເລືອກຕັ້ງ ແລະສະມາຊິກສະພາແຫ່ງຊາດ ມີໜ້າທີ່ຕິດຕາມກວດກາຕາມພາລະບົດບາດ

ແລະຄວາມຮັບຜິດຊອບຂອງຕົນ, ມອບໃຫ້ລັດຖະບານ ແລະອົງການປົກປ້ອງກົດໝາຍນຳເອົາມະຕິກອງປະຊຸມສະພາແຫ່ງຊາດສະບັບນີ້ໄປຜັນຂະຫຍາຍ ແລະຈັດຕັ້ງປະຕິບັດໃຫ້ປະກົດຜົນເປັນຈິງ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

ສະພາແຫ່ງຊາດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ປະທານ

ທອງສິງ ທຳມະວົງ